**ມິຊຊາອາທິດທີ 32 ກຳນົດທຳມະດາປີ C**

**ວັນທີ 10 ພະຈິກ 2019**



**ພຣະວໍລະສານໂດຍນັກບຸນລູກາ 20, 27-38**

ໃນເວລານັ້ນ, ພວກຊາດູເຊອັນແມ່ນພວກທີ່ປະຕິເສດວ່າບໍ່ມີການກັບເປັນຄືນມາ, ເຂົ້າມາຖາມພຣະເຢຊູເຈົ້າວ່າ: ພຣະອາຈານ, ທ່ານໂມແຊໄດ້ບັນຍັດໄວ້ວ່າດັ່ງນີ້ຄື ຖ້າຊາຍຄົນໃດມີພັນລະຍາແລ້ວຕາຍໄປໂດຍບໍ່ມີລູກ ກໍໃຫ້ນ້ອງຊາຍຂອງເຂົາເອົານາງໝ້າຍນັ້ນມາເປັນພັນລະຍາເພື່ອໃຫ້ເກີດລູກສືບຕະກູນຂອງອ້າຍຕໍ່ໄປ. ຍັງມີອ້າຍນ້ອງເຈັດຄົນ: ອ້າຍຜູ້ກົກແຕ່ງງານແລ້ວກໍຕາຍໂດຍບໍ່ມີລູກ. ນ້ອງຊາຍຜູ້ທີສອງ, ນ້ອງຊາຍຜູ້ທີສາມຈົນຮອດຜູ້ທີເຈັດກໍໄດ້ແຕ່ງງານກັບນາງໝ້າຍນັ້ນ, ແລ້ວກໍຕາຍໄປໝົດໂດຍບໍ່ມີລູກ. ທ້າຍສຸດ, ຍິງນັ້ນກໍຕາຍດ້ວຍ. ດັ່ງນີ້ເມື່ອວັນກັບເປັນຄືນມາ, ຍິງນັ້ນຈະເປັນພັນລະຍາຂອງຜູ້ໃດ? ຍ້ອນວ່າທັງເຈັດຄົນກໍໄດ້ແຕ່ງງານກັບນາງ.

ພຣະເຢຊູເຈົ້າຊົງຕອບວ່າ: ລູກຫລານຂອງໂລກນີ້ແຕ່ງງານກັນແຕ່ພວກທີ່ສົມຈະມີສ່ວນໃນໂລກໜ້າແລະການກັບເປັນຄືນມາຈາກພວກຜູ້ຕາຍນັ້ນຈະບໍ່ແຕ່ງງານກັນດອກ. ຍ້ອນວ່າພວກເຂົາຈະບໍ່ຕາຍອີກ ຈະເປັນດັ່ງພວກເທວະດາແລະເປັນບຸດຂອງພຣະເຈົ້າ. ຍ້ອນວ່າໄດ້ກັບເປັນຄືນມາແລ້ວ.

ສ່ວນເລື່ອງທີ່ວ່າພວກຜູ້ຕາຍຈະຕ້ອງກັບເປັນຄືນມານັ້ນ, ໂມແຊກໍໄດ້ກ່າວໄວ້ແລ້ວໃນເລື່ອງພຸ່ມໄມ້ເມື່ອທ່ານຮຽກພຣະອົງເຈົ້າວ່າ ພຣະເຈົ້າຂອງອາບຣາຮາມ, ພຣະເຈົ້າຂອງອີຊາອັກແລະພຣະເຈົ້າຂອງຢາກ໊ອບ. ນັ້ນແລ ພຣະອົງບໍ່ແມ່ນພຣະເຈົ້າຂອງພວກຄົນຕາຍ, ແຕ່ແມ່ນພຣະເຈົ້າຂອງພວກຄົນເປັນ. ຍ້ອນວ່າທຸກຄົນມີຊີວິດຕໍ່ໜ້າພຣະອົງ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 20, 27-38**

ວັນທີ 01 ພະຈິກທີ່ຜ່ານມາ, ພວກເຮົາໄດ້ສົມໂພດນັກທັງບຸນທັງຫລາຍຂອງພຣະເຈົ້າໃນສະຫວັນ. ງານສົມໂພດນີ້ຊ່ວຍພວກເຮົາໃຫ້ມີຄວາມສຳພັນກັບບັນດານັກບຸນຫລາຍຂຶ້ນ ແລະໃນເວລາດຽວກັນກໍຊ່ວຍພວກເຮົາໃຫ້ເຂົ້າໃຈວ່າພວກເຮົາລ້ວນແຕ່ຖືກຮຽກເອີ້ນໃຫ້ເປັນນັກບຸນ, ເປັນຜູ້ສັກສິດເໝືອນກັບພຣະບິດາສະຫວັນຂອງພວກເຮົາເປັນຜູ້ສັກສິດ.

ຈາກນັ້ນ, ວັນທີ 02 ຂອງເດືອນນີ້, ພວກເຮົາກໍລະລຶກແລະພາວະນາເປັນພິເສດຫາທຸກຄົນທີ່ເຊື່ອໃນພຣະເຈົ້າທີ່ໄດ້ຈາກໂລກນີ້ໄປ. ແລະກໍເປັນໂອກາດໃຫ້ພວກເຮົາໄດ້ພາວະນາໃຫ້ບັນດາຍາດຕິພີ່ນ້ອງຂອງພວກເຮົາທີ່ລ່ວງລັບໄປແລ້ວ, ພິເສດເຖິງບັນດາດວງວິນຍານໃນໄຟຊຳລະທີ່ບໍ່ມີໃຜຄິດຮອດໃນຄຳພາວະນາ.

ແລະກໍແມ່ນຕະຫລອດເດືອນພະຈິກນີ້ທີ່ພຣະກຣິສຕະຈັກເຊື້ອເຊີນພວກເຮົາໃຫ້ພາວະນາຫາຜູ້ລ່ວງລັບໄປ. ແນ່ນອນ, ເມື່ອພວກເຮົາພາວະນາຫາຜູ້ທີ່ຈາກພວກເຮົາໄປແລ້ວ ກໍທຳໃຫ້ພວກເຮົາຄິດຫາສັດຈະທຳຂອງຊີວິດອັນແມ່ນຄວາມຕາຍສຳລັບຕົວເຮົາເອງເຊັ່ນດຽວກັນ. ເພາະວັນໜຶ່ງພວກເຮົາກໍຕ້ອງຈາກໂລກນີ້ໄປ. ແຕ່ຄຳຖາມທີ່ຕາມມາກໍຄື: ພວກເຮົາຈະໄປໃສ? ຢູ່ໃສ? ມີຫຍັງແນ່ບ່ອນທີ່ພວກເຮົາຈະໄປ? ພວກເຮົາຈະໄດ້ພົບຄົນໃນຄອບຄົວຂອງພວກເຮົາທີ່ຈາກພວກເຮົາໄປກ່ອນບໍ? ພວກເຮົາຈະໄດ້ແຕ່ງງານມີລູກມີເຕົ້າອີກບໍ? ຄຳຖາມເຫລົ່ານີ້ຈະທຳໃຫ້ພວກເຮົາຢ້ານກົວຍ້ອນພວກເຮົາບໍ່ຮູ້ຈັກສະຖານທີ່ຊຶ່ງພວກເຮົາຈະໄປຫລັງຄວາມຕາຍ. ຄຳຖາມເຫລົ່ານີ້ບໍ່ພຽງແຕ່ແມ່ນຄຳຖາມຂອງພວກເຮົາວັນນີ້ ແຕ່ກໍເປັນຄຳຖາມຂອງພວກຊາດູເຊວ (ຜູ້ທີ່ບໍ່ເຊື່ອວ່າມີການກັບເປັນຄືນມາຫລັງຄວາມຕາຍ) ໃນສະໄໝຂອງພຣະເຢຊູເຈົ້າ.

ວັນນີ້ພຣະເຢຊູເຈົ້າໄດ້ອະທິບາຍໃຫ້ພວກຊາດູເຊວກໍຄືໃຫ້ພວກເຮົາແຕ່ລະຄົນວ່າ ສິ່ງທີ່ທຸກຄົນຢ້ານກົວໃນໂລກນີ້ຄືຄວາມຕາຍ. ເພາະສະນັ້ນ, ພວກເຂົາຈຶ່ງຊອກສະແຫວງຫາທຸກສິ່ງຢ່າງທີ່ພວກເຂົາຕ້ອງການເພື່ອຫາກຳໄລໃຫ້ຊີວິດເຊັ່ນ: ການຫລິ້ນກິນມ່ວນຊື່ນ, ການແຕ່ງງານ, ການມີລູກສືບເຊື້ອສາຍ. ແຕ່ສິ່ງເຫລົ່ານີ້ບໍ່ສາມາດຊ່ວຍພວກເຮົາໃຫ້ມີຊີວິດຍືນຍາວໄດ້, ບໍ່ສາມາດຊ່ວຍພວກເຮົາໃຫ້ຫລີກກັບຄວາມຕາຍໄດ້. ມີແຕ່ຜູ້ດຽວເທົ່ານັ້ນທີ່ສາມາດຊ່ວຍພວກເຮົາໃຫ້ມີຊີວິດທີ່ບໍ່ຕາຍເປັນໄດ້ນັ້ນຄືພຣະເຢຊູກຣິສໂຕພຣະເຈົ້າຂອງພວກເຮົານັ້ນເອງ. ຍ້ອນພຣະອົງໄດ້ຕາຍແລະກັບເປັນຄືນມາໃນວັນທີສາມ. ແລະຜູ້ທີ່ເຊື່ອໃນພຣະອົງແມ່ນວ່າຕາຍໄປແລ້ວກໍຈະກັບເປັນຄືນມາ (ຢຮ 11, 25). ດັ່ງນັ້ນ, ພຣະເຈົ້າຂອງພວກເຮົາຈຶ່ງເປັນພຣະເຈົ້າຂອງພວກຜູ້ເປັນ ບໍ່ແມ່ນພຣະເຈົ້າຂອງພວກຜູ້ຕາຍ. ຍ້ອນທຸກຄົນທີ່ເຊື່ອໃນພຣະອົງລ້ວນແຕ່ໄດ້ຮັບຊີວິດ.

ເມື່ອພວກເຮົາກັບເປັນຄືນມາແລ້ວ, ພວກເຮົາຈະເປັນຄືເທວະດາ. ໝາຍວ່າພວກເຮົາຈະບໍ່ຊອກສະແຫວງຫາຄວາມສຸກແບບຢູ່ໃນໂລກນີ້, ຄວາມສຸກຝ່າຍເນື້ອໜັງອີກ. ຍ້ອນພວກເຮົາມີຄວາມສຸກຍອດປາດຖະໜາອັນແມ່ນໄດ້ຢູ່ຮ່ວມກັບພຣະເຢຊູກຣິສໂຕພຣະເຈົ້າຂອງພວກເຮົາແລ້ວ.

ຂໍໃຫ້ວາຈາພຣະເຈົ້າວັນນີ້ຊ່ວຍພວກເຮົາໃຫ້ເຂົ້າໃຈເຖິງຄວາມເຊື່ອກຣິສຕັງກາໂທລິກແລະສິ່ງທີ່ພວກເຮົາປະກາດອອກມາໃນບົດຂ້າພະເຈົ້າເຊື່ອ: ເຊື່ອວ່າກາຍຈະກັບເປັນຄືນມາ, ເຊື່ອມີຊີວິດນິລັນດອນ. ອີງເທິງຄວາມເຊື່ອນີ້ພວກເຮົາຈະມີຄວາມຫວັງແລະໄວ້ໃຈວ່າ ຄວາມຕາຍບໍ່ແມ່ນສິ່ງສຸດທ້າຍ, ແຕ່ເປັນການກ້າວເຂົ້າສູ່ຊີວິດໃໝ່ອັນແມ່ນຊີວິດຮ່ວມກັບພຣະເຢຊູກຣິສໂຕພຣະເຈົ້າຂອງພວກເຮົານັ້ນເອງ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ